# ສະຫລອງການບັງເກີດຂອງນັກບຸນຢວງບັບຕິສຕາ
# ວັນທີ 24 ມິຖຸນາ 2018



**ພຣະວໍລະສານໂດຍນັກບຸນລູກາ 1, 57-66, 80**

ເມື່ອເຖິງເວລາຈະຕ້ອງປະສູດ, ນາງເອລີຊາແບັດກໍໄດ້ບັງເກີດບຸດຊາຍຜູ້ໜຶ່ງ. ພວກຍາດພີ່ນ້ອງ ແລະຊາວບ້ານຮູ້ຂ່າວວ່າພຣະເຈົ້າໄດ້ສຳແດງພຣະເມດຕາກາລຸນາອັນຍິ່ງໃຫຍ່ຕໍ່ນາງດັ່ງນີ້ ກໍ ພາກັນມາຮ່ວມຍິນດີນຳດ້ວຍ.

ພໍເຖິງວັນທີແປດ ພວກເຂົາກໍມາປະຊຸມເພື່ອທຳພິທີສິນຕັດໃຫ້ແກ່ເດັກນັ້ນ ແລະຢາກຕັ້ງຊື່ໃຫ້ວ່າ: « ຊາກາຣີ » ຄືຊື່ບິດາ. ແຕ່ມານດາຂອງເດັກກ່າວວ່າ: ບໍ່ໄດ້, ຕ້ອງໃສ່ຊື່ວ່າ « ຢວງ ».

ພວກນັ້ນຈຶ່ງຕອບວ່າ: ໃນເຊື້ອສາຍຂອງເຈົ້າບໍ່ມີໃຜຊື່ວ່າແນວນັ້ນເລີຍ. ເຂົາຈຶ່ງທຳສັນຍານຖາມບິດາຂອງເດັກວ່າຈະໃຫ້ຕັ້ງຊື່ແນວໃດ?

ຊາກາຣີຂໍກະດານແຜ່ນໜຶ່ງແລະຂຽນວ່າ: ຊື່ເດັກນີ້ແມ່ນ « ຢວງ ». ທັນໃດນັ້ນ, ທຸກຄົນມີຄວາມພິດສະວົງ. ແລ້ວທັນໃດ, ທ່ານກໍປາກໄດ້ແລະຮ້ອງຂອບພຣະຄຸນພຣະເປັນເຈົ້າ. ປະຊາຊົນໃນບໍລິເວນນັ້ນພາກັນຮູ້ສຶກຢ້ານກົວ. ເຫດການນີ້ກໍໄດ້ເລົ່າລືໄປທົ່ວແຖບພູໃນແຂວງຢູເດ. ທຸກຄົນທີ່ໄດ້ຍິນກໍຈື່ຈຳໄວ້ພ້ອມທັງກ່າວວ່າ: ເດັກຜູ້ນີ້ຈະເປັນແນວໃດນໍ? ຕາມຄວາມຈິງ, ພຣະອົງເຈົ້າຊົງປົກປ້ອງຮັກສາເດັກນີ້ແລ້ວ.

ສ່ວນເດັກນັ້ນກໍຈະເລີນເຕີບໂຕ, ມີຈິດໃຈເຂັ້ມແຂງຂຶ້ນທຸກວັນ. ຕໍ່ມາໄດ້ໄປອາໄສຢູ່ທີ່ປ່າງວຈົນຮອດເວລາທີ່ຈະປາກົດຕົວແກ່ປະຊາກອນອິສຣາແອນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 1, 57-66, 80**

ວັນນີ້ພຣະກຣິສຕະຈັກສະຫລອງການບັງເກີດຂອງນັກບຸນຍວງບັບຕິສຕາ. ຄຳວ່າ: « ຍວງ » ໃນພາສາພຣະຄຳພີມີຄວາມໝາຍວ່າ: « ພຣະພອນຂອງພຣະເຈົ້າ ». ແນ່ນອນ, ການບັງເກີດມາຂອງນັກບຸນຍວງບັບຕິສຕາເປັນພຣະຄຸນພຣະພອນສຳລັບນາງເອລີຊາແບັດແລະທ່ານຊາກາຣີຜູ້ເປັນບິດາມານດາ. ເພາະທ່ານທັງສອງໄດ້ເຖົ້າແກ່ຊະຣາແລ້ວ, ແລະໃຜໆກໍວ່າເປັນໝັນ. ໃນສັງຄົມຊາວຢິວສະໄໝນັ້ນ, ຖ້າຄອບຄົວໃດຫາກບໍ່ມີຜູ້ສືບເຊື້ອສາຍ, ກໍຖືວ່າພຣະເຈົ້າບໍ່ອວຍພອນໃຫ້ຄອບຄົວນັ້ນ. ເຖິງຢ່າງນັ້ນກໍຕາມ, ທ່ານຊາກາຣີແລະນາງເອລີຊາແບັດກໍບໍ່ໄດ້ລົດລະໃນການເຊື່ອໝັ້ນໃນພຣະເຈົ້າ. ທ້າຍສຸດ, ທ່ານທັງສອງກໍໄດ້ຮັບພຣະພອນຈາກພຣະເຈົ້າ ຄືການບັງເກີດມາຂອງນັກບຸນຍວງນັ້ນເອງ.

ເພາະສະນັ້ນ, ພຣະວໍລະສານໃນວັນນີ້ຈຶ່ງກ່າວວ່າ ບັນດາຍາດພີ່ນ້ອງແລະຜູ້ທີ່ຢູ່ອ້ອມຂ້າງຄອບຄົວຂອງພໍ່ແມ່ນັກບຸນຍວງຈຶ່ງພາກັນມາເບິ່ງຄວາມຮັກຄວາມເມດຕາອັນຍິ່ງໃຫຍ່ຂອງພຣະເຈົ້າທີ່ມີຕໍ່ຄອບຄົວນີ້. ເພາະສຳລັບພວກເຂົາ, ເຫດການນີ້ເປັນສິ່ງໜ້າພິດສະວົງແລະອັດສະຈັນຢ່າງຍິ່ງ. ໃນທີ່ນີ້ພວກເຮົາເຫັນວ່າການບັງເກີດມາຂອງນັກບຸນຍວງບໍ່ພຽງແຕ່ເປັນພຣະພອນຂອງພຣະເຈົ້າສຳລັບຄອບຄົວຂອງທ່ານເທົ່ານັ້ນ, ແຕ່ຍັງເປັນພຣະພອນສຳລັບຜູ້ທີ່ຢູ່ອ້ອມຂ້າງຄອບຄົວຂອງທ່ານອີກດ້ວຍ. ແຕ່ພຣະພອນນີ້ບໍ່ໄດ້ຢຸດຢູ່ທີ່ບໍລິເວນບ້ານເກີດເມືອງນອນຂອງນັກບຸນຍວງ, ພຣະພອນນີ້ຍັງໄດ້ເຕີບໃຫຍ່ຂະຫຍາຍຕົວພ້ອມກັບນັກບຸນຍວງແລະຜ່ານທາງນັກບຸນຍວງໄປເຖິງນານາຊາດ. ຍ້ອນອາໄສສຽງຂອງນັກບຸນຍວງທີ່ໂຮຮ້ອງໃນທີ່ປ່ຽວໃຫ້ຜູ້ທີ່ຟັງໄດ້ຮູ້ຈັກສຳນຶກເຖິງຄວາມຜິດຂອງຕົນແລະກັບຈິດປ່ຽນໃຈມາຫາພຣະເຈົ້າ. ອາໄສແບບຢ່າງຊີວິດຂອງນັກບຸນຍວງໃນການອົດອາຫານແລະພາວະນາເພື່ອຕຽມທາງໃຫ້ຜູ້ທີ່ມານຳຫລັງທ່ານຄືພຣະເຢຊູກຣິສໂຕເຈົ້າ, ທຸກຄົນຈຶ່ງຮູ້ຈັກຕື່ນເຝົ້າແລະພາວະນາເພື່ອຕຽມການສະເດັດມາຂອງພຣະຜູ້ກູ້ໄຖ່. ອາໄສການບອກສອນຂອງນັກບຸນຍວງ ພວກເຮົາຈຶ່ງຮູ້ຈັກວ່າພຣະເຢຊູກຣິສໂຕເຈົ້າຄືລູກແກະຂອງພຣະເຈົ້າທີ່ຕ້ອງຖືກຂ້າຖະຫວາຍເພື່ອໄຖ່ບາບຂອງໂລກ. ທ້າຍສຸດ, ນັກບຸນຍວງກໍໄດ້ເປັນພິຍານເຖິງຄວາມຈິງອັນແມ່ນຜູ້ທີ່ທ່ານປະກາດຄືພຣະເຢຊູກຣິສໂຕເຈົ້າ ດ້ວຍຊີວິດຂອງທ່ານເອງໃນສະໄໝຂອງກະສັດເຮຣົດ.

ສິ່ງເຫລົ່ານີ້ຊ່ວຍໃຫ້ພວກເຮົາເຂົ້າໃຈເຖິງຄວາມໝາຍຂອງວັນສະຫລອງການບັງເກີດຂອງນັກບຸນຍວງ. ອາໄສການບັງເກີດມາຂອງທ່ານນັກບຸນ, ພວກເຮົາຈຶ່ງສຳພັດໄດ້ເຖິງຄວາມຮັກຄວາມເມດຕາຂອງພຣະເຈົ້າທີ່ມີຕໍ່ປະຊາກອນຂອງພຣະອົງ. ການບັງເກີດມາຂອງທ່ານນັກບຸນຍັງເປັນການຊ່ວຍພວກເຮົາໃຫ້ຮູ້ຈັກຕຽມຈິດໃຈເພື່ອຕ້ອນຮັບອົງພຣະຜູ້ກູ້ໄຖ່ທີ່ຈະສະເດັດມາເພື່ອຍົກບາບໂທດຂອງໂລກ.

ຂໍໃຫ້ວັນສະຫລອງນີ້ຊ່ວຍພວກເຮົາໃຫ້ສຳພັດໄດ້ເຖິງພຣະຄຸນພຣະພອນຂອງພຣະເຈົ້າທີ່ມີຕໍ່ພວກເຮົາແຕ່ລະຄົນ ແລະອາໄສພຣະຄຸນນີ້ພວກເຮົາຈຶ່ງສາມາດເປັນພິຍານ, ເປັນຜູ້ນຳພາຄົນອື່ນໃຫ້ມາຮູ້ຈັກແລະຮັກພຣະເຢຊູ, ພຣະຜູ້ກູ້ໄຖ່ຂອງພວກເຮົາ.ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ